# ໃຜວ່າ
# ເງິນເປັນພະເຈົ້າ..?



ໂຮມເລື່ອງສັ້ນ ຂອງ

ດວງຈຳປາ

ໂຮມເລື່ອງສັ້ນ

# ໃຜວ່າ
# ເງິນເປັນພະເຈົ້າ..?

ດອງຈຳປາ

ສຳນັກພິມ ດອກເກດ

2011

# ໃຜວ່າ
# ເງິນເປັນພະເຈົ້າ..?


ໂຮມເລື່ອງສັ້ນ ໂດຍ: ດວງຈຳປາ

ຮູບປະກອບ: ສຸກພັນສາ ພູຜາສຸກ

ບັນນາທິການ: ດວງເດືອນ ບຸນຍາວົງ

ອອກແບບຈັດໜ້າ: ຄຳມັກ ວົງສັກດາ

ອອກແບບໜ້າປົກ: ສຸກພັນສາ ພູຜາສຸກ



ຈັດພິມ ແລະ ຈຳໜ່າຍ:

ດອກເກດ
DokkeD

ສຳນັກພິມດອກເກດ
ຖະໜົນໂພນທັນ-ຮ່ອງແກ
ບ້ານໂພນທັນ, ເມືອງໄຊເຊດຖາ
ນະຄອນຫຼວງວຽງຈັນ, ສ.ປ.ປລາວ
ໂທລະສັບ: 020 2220 4895

ອຸປຸຖຳໂດຍ: M-Point Mart, DATA COM

ທະບຽນອະນຸຍາດ ເລກທີ: 294 ພຈ 22092010

ພິມຄັ້ງທີ 1, ວຽງຈັນ ສ.ປ.ປ ລາວ, ກັນຍາ 2011

ຈຳນວນ: 5000 ຫົວ

ພິມທີ່: ໂຮງພິມ ລາວ ຢູນິພຣິ້ນ



ສະຫງວນລິຂະສິດ © ດາຣາ ກັນລະຍາ, 2011

# ສາລະບັນ

ຄຳນຳຂອງຜູ້ຈັດພິມ ................ ກ
ເສືອ...ກ..................3
ອີ່ ຊູຊຸກີ................15
ເຫດເກີດ................27
ຕາເວັນລັບຫຼູ່ມພູ................37
ຫຼີງຄອນ................53
ໃຜວ່າເງິນເປັນພະເຈົ້າ..............59
ລູກ................77
ຄ່າກັບລາຄາ................91
ທີ່ຝາກໃຈ................99
ຂ້ອຍຜິດເອງ..............127
ນ້ອງສາວ..............147
ກ່ອນຈະເຖິງວັນນີ້..............161

## ຄຳເຫັນຂອງບັນນາທິການ

### ສິບເອັດເລື່ອງສັ້ນ ຂອງ ດວງຈຳປາ ເດີນທາງຜ່ານເວລາ ກວ່າເຄິ່ງສະຕະວັດ ບອກເລົ່າຫຍັງແດ່ ?

ຂ້າພະເຈົ້າ ອາດຈະເປັນຜູ້ນຶ່ງທີ່ໄດ້ອ່ານບົດຂຽນບົດປະພັນທຸກປະເພດຂອງດວງຈຳປາ ມາແຕ່ດົນນານ ບໍ່ຂາດວັກຂາດຕອນ ແລະບໍ່ແມ່ນອ່ານພຽງເທື່ອນຶ່ງເທື່ອດຽວ ອ່ານຫຼາຍຫຼີບຫຼາຍຕ່າວ ໃນຫຼາຍວາລະ ແລະໂອກາດຕ່າງກັນ ອ່ານໃນນາມນັກອ່ານ ອ່ານໃນນາມນັກຂຽນ (ຄືກັນ ເພື່ອຊອກຈຸດດີຈຸດອ່ອນຕິຊົມ) ອ່ານໃນນາມນັກວິຊາການວັນນະຄະດີ (ເວລາຕ້ອງຍົກເປັນແບບຢ່າງ) ແລະອ່ານໃນນາມ ບັນນາທິການເພື່ອນຳສະເໜີ ແຕ່ບໍ່ວ່າຈະອ່ານໃນນາມໃຜ ສິ່ງນຶ່ງທີ່ມີຮ່ວມກັນຕະຫຼອດກໍແມ່ນ ຄວາມພໍໃຈ ຄວາມມ່ວນມັນຂອງບົດເລື່ອງນັ້ນເອງ.

ໃນນາມນັກອ່ານວັນນະກຳຮ່ວມສະໄໝ ຂ້າພະເຈົ້າມ່ວນນຳລີລາ ພາສາຂອງດວງຈຳປາ ທີ່ຊ່າງຂຸດຄົ້ນເອົາຄຳເວົ້າຄຳວ່າ ມາ

ໃສ່ປາກໂຕລະຄອນ ຢ່າງຄ່ອງຄື, ຕົວລະຄອນທີ່ເປັນຄົນທຳມະດາສາມັນ ການສຶກສາບໍ່ຫຼາຍ ຄື "ແມ່ແອ" ນ້າສາວນາງບຸນເຖິງ ແລະເຈົ້າຂອງລົດຈັກຊູຊຸກິ ໃນເລື່ອງ "ອີ່...ຊູຊຸກິ" (1971) ກໍມີພາສາແບບສະເພາະຂອງລາວ ສະແດງຄວາມເຊື່ອໝັ້ນຕົນເອງ ແລະຜູ່ເປັນຜົວ ດ້ວຍຄຳເວົ້າກົງໄປກົງມາວ່າ *"...ແນວຜົວໂຕ ຄືເຕົ່ານີ້ ຫາເງິນມາໄດ້ສິບກໍມອບສິບ ໄດ້ມາຊາວກໍມອບຊາວ ບໍ່ຂາດກີບຂາດບີ້..."* ຫຼື ນາງສີບົວ (ໃຜວ່າ ເງິນເປັນພະເຈົ້າ ? 1973) ຍິງສາວຜູ່ຕ້ອງຜະເຊີນກັບ ພະຍຸຊີວິດ ແຕ່ຍັງອ່ອນເຍົາ ໄຮ້ການສຶກສາພາສາຄຳເວົ້າຂອງນາງ ກໍເຜີຍແບບທາດແທ້ຂອງນາງ ຕາມລະດັບສະຖານະຂອງຕົນ *"...ເປັນອັນວ່າ ຂະນ້ອຍປ່ຽນອາຊີບອີກ ! ຫ່າ? ອາຊີບໃໝ່ນີ້ຫວະ? ໂອ ກະເປັນເມຽນ້ອຍເພິ່ນຈັ່ງໃດ໋ລະ ! ອຸ້ຍ! ຊ່າງຖາມ ກໍພໍເຮັດຢູ່ດອກຂະນ້ອຍ ມັນສຳບາຍກວ່າເກົ່າຫຼາຍ ນັ່ງໆນອນໆຢູ່ເຮືອນນຳແມ່ ໄປເສີມສວຍ ແດ່..."* (ໜ. 68)

ແລະເມື່ອຕົວລະຄອນ ເປັນພະນັກງານຜູ່ສັດຊື່ ມີຈິດສຳນຶກຕໍ່ໜ້າທີ່ ແລະຄວາມຮັບຜິດຊອບ ຄວາມຄິດຄວາມເວົ້າທ່າທີກໍປ່ຽນໄປ ຈິດສຳນຶກທີ່ສະທ້ອນອອກ ໃນພາສາທີ່ນັກຂຽນໃຊ້ ກໍສະແດງເຖິງ ມະໂນທຳ ທີ່ເຮັດໜ້າທີ່ຂອງມັນຕາມອຸດົມການ ທີ່ຜ່ານການຫລໍ່ຫຼອມມາ: *"ໜ້າທີ່ ວຽກງານຂອງເຂົາ ແມ່ນເຊັນເອກະສານ ທີ່ປະກອບມາຢ່າງຖືກຕ້ອງ ແມ່ນແທ້ ! ແຕ່ຖ້າບໍ່ຖືກຕ້ອງເດ້? ຄຸນຄ່າຂອງລາຍເຊັນ ຈະມາແລກກັບຖ້ວຍເຝີແລະເບຍນີ້ຫຼື ? ເຂົາເດ່ເງິນໃຫ້ເດັກເສີບ ແລ້ວກໍຍ່າງອອກຈາກຮ້ານ ບໍ່ລືມແນມໜ້າສາວຕູ້ຍປາກດັງ..."* (ຄຳ ກັບ ລາຄາ, ປີ 1985)

ໃນນາມນັກວິຊາການ ທີ່ຕ້ອງນຳສະເໜີເລື່ອງສູ່ສາທາລະນະ ຂ້າພະເຈົ້າພົບວ່າ ເລື່ອງສັ້ນຂອງ ດວງຈຳປາ ບໍ່ພຽງແຕ່ໃຫ້ຄວາມ

ບັນເທີງ ເພີດເພີນອາລົມ ຍາມອ່ານເທົ່ານັ້ນ ແຕ່ໂຄງສ້າງ ໃຈຄວາມ ຂອງທຸກເລື່ອງ ກັບໂຕລະຄອນທີ່ແລ່ນໄລ່ກັນ ຢູ່ໃນໜ້າເຈັ້ງແຕ່ລະແຜ່ນ ແມ່ນຕ່ອງໂສ້ຊີວິດທີ່ເກາະກ່າຍກັນ ເປັນແວ່ນແຍງສະທ້ອນ ຄວາມເປັນຈິງ ແຫ່ງຍຸກສະໄໝຂອງສັງຄົມ ຄົນທຸກຄົນຮັ່ງ ຕ່າງກັນຢ່າງໃດ ມີທຸກມີສຸກ ຕ່າງແລະຄືກັນຢ່າງໃດ?

ຍາພໍ່ຜູ້ຮັ່ງມີ ແສນໃຈດີ ດ້ວຍການໃຫ້ຄວາມຊ່ອຍເຫຼືອນາງສີບົວ (ໃຜວ່າ ເງິນເປັນພະເຈົ້າ?) ໃນຄາວລຳບາກນັ້ນ ເປັນຄົນດີແນວໃດ ຫຼື ອ້າງຄວາມດີ ເພື່ອສ້າງຄວາມຊົ່ວກັນແທ້?

ຫຼື ຄົນທີ່ເປັນພໍ່ ລູກຫຼາຍ ຢາກຫໍ່ອາຫານເຫຼືອຈາກຮ້ານໄປສູ່ລູກເມຍກິນ ນັ້ນເດ ເປັນຫຍັງຊິຕ້ອງເສືອກ (ຢ່າອ່ານວ່າ ເສືອ... ກໍ ໄດ້ເນີ ອ່ານວ່າ ເສືອກ ແຕ່ລາກສຽງຍາວໃນ ບາດທ້າຍ, ໜ 3) ເວົ້າວ່າເອົາໄປໃຫ້ໝາ? ເສືອກ ອາດເປັນຄຳເກົ່າບູຮານແດ່ ສຳລັບຄົນຮຸ່ນນີ້ ເພາະເລື່ອງນີ້ ຂຽນແຕ່ປີ 1971, ໄລ່ອາຍຸ ກໍແມ່ນ 41 ປີແລ້ວ, ເສືອກ ໝາຍຄວາມວ່າ ເຮັດ(ກະທຳການໃດນຶ່ງ) ຢ່າງບໍ່ເໝາະສົມ, ບໍ່ສົມຄວນຈະເຮັດຈະທຳ ໃນຈຸດປະສົງເພື່ອປິດບັງຄວາມເປັນຈິງໃດນຶ່ງ. ໃນວັດຈະນານຸກົມພາສາລາວ ລາງສະບັບ ກໍອາດຈະບໍ່ທັນໄດ້ບັນຈຸຄຳນີ້ໃສ່ ນັກຂຽນຄົ້ນພົບຄຳ ແລະນຳມາໃຊ້ເປັນການຮັກສາຄຳສັບໃນພາສາລາວເກົ່າໆໄວ້. ດຽວນີ້ ອາດໃຊ້ຄຳບັງອາດ ກ້າດີ ລອງດີ ແທນ, ແຕ່ຄວາມໝາຍກໍຍັງບໍ່ກົງກັນຄັກ.

ແຕ່ສິ່ງທີ່ສະທ້ອນກໍຄື ຄ່ານິຍົມຂອງສັງຄົມ ການບໍລິໂພກແບບລາວໆ ທີ່ຕ້ອງກິນເຫຼືອເພື່ອຖິ້ມ ຫຼື ເພື່ອອວດອ້າງຖານະ... ແລະແມ່ນແຕ່ຄົນທຳມະດາສາມັນ ກໍຍັງມັກເຮັດໜ້າໃຫຍ່ ໄວ້ທ່າຫຼາຍກວ່າທີ່ຈະຍອມຮັບ ຮັກສາ ເປີດເຜີຍ ສັດຈະ (ຄວາມຈິງ)

ແຕ່ໃນທີ່ສຸດ ກໍຖືກກົດເກນທຳມະຊາດຂອງມະນຸດເອງນັ້ນແຫຼະ ລົງໂທດເອົາໄດ້ຄືກັນ.

ນອກຈາກລີລາພາສາທີ່ຄ່ອງຄື ສົມຕົວລະຄອນແລ້ວ ເນື້ອເລື່ອງຍັງຊ້ອນເຊື່ອງເລື່ອງຄະຕິທຳ ຕາມແນວພຸດທະສາສະໜາຢ່າງແນບນຽນ ຄືນຜູ້ລະເມີດສິນຫ້າ ຂໍ້ໃດຂໍ້ນຶ່ງ ຫຼື ບໍ່ມີ ຫິຣິໂອດຕັບປະ ແລະ ເລື່ອງຂອງເວນກຳ-ບາບ-ບຸນ-ຄຸນໂທດ ທີ່ຈະສະໜອງຄືນໃນຮູບການໃດນຶ່ງ ທີ່ຜູ້ຂຽນຊີ້ບອກໄວ້ແລ້ວໃນເລື່ອງ ຫຼື ປ່ອຍໃຫ້ຜູ້ອ່ານຄິດຄຳນຶງຕໍ່ເຕີມເອງ ດັ່ງ “ເຂົາ ແລະ ນາງ” ທີ່ສົມຮັກສົມຫວັງ ໄດ້ແຕ່ງດອງແລະມີລູກຮ່ວມກັນ(ລູກ, ໜ. 77, 1974) ໃນຍຸກທີ່ໂລກເອດ ພວມລະບາດ ຄືໃນທຸກວັນນີ້ ການມັກມາກໃນກາມ ມັກໄປບ້ານພັກລີ້ສອດ ເຊິ່ງຜິດທັງສີລະທຳ ແລະກົດທຳມະຊາດທີ່ຈະນຳໄປ ສູ່ການທະວີຄວາມທຸກ ແລະຕື່ມສະມາຊິກຜູ້ໜ້າສົງສານໃຫ້ໂລກນີ້ອີກ ແລ້ວຕົນເອງຕ້ອງຝືນໃຈແບກຫາບຄວາມທຸກທໍລະມານ ອີນອົມເອົາຄວາມລັບຄັບເອິກໄວ້ພຽງຄົນດຽວໄປຊົ່ວຊີວິດ ດັ່ງທີ່ເຂົາຜູ້ນັ້ນ ຕ້ອງຜະເຊີນຢູ່ ອະນິດຈາ ໃນໂລກນີ້ ຍັງຈະມີຜູ້ຄົນແບບນີ້ອີກທໍ່ໃດ ເລື່ອງນີ້ ຜູ້ຂຽນກໍພຽງແຕ່ຍົກມາ ໃຫ້ເປັນອຸທາຫອນບອກເລົ່າເວົ້າສູ່ຟັງດ້ວຍນ້ຳສຽງສຸດແສນປານີ ແລະໃຫ້ອະໄພ.

*“ເຂົາປະຕິບັດໜ້າທີ່ສາມີທີ່ດີ ຄືບ້ານຄືເມືອງ ຢູ່ກັບຢ້າວ ເຝົ້າກັບເຮືອນ ບໍ່ອອກຫຼິ້ນອອກທ່ຽວ ເຂົາໃຫ້ກຽດເມຍສະເໝີ ໄປໃສເອົາໄປນຳ ກິນຫຍັງໃຫ້ກິນນຳ ຍົກຍ້ອງໃນສິ່ງທີ່ນາງທຳໄດ້...”* (ລູກ, 1972 ,ໜ. 78).

ແຕ່ດ້ວຍລີລາພາສາແລະຂໍ້ມູນວິທະຍາສາດ ທີ່ນຳມາເສີມໃສ່ນັ້ນ ກໍອາດຈະເຕືອນສະຕິໃຜກໍໄດ້ ທີ່ບັງເອີນມາອ່ານພໍ້: *ທັນໃດ*

*ພາບຕໍ່ໜ້າ ກໍສະກິດໃຫ້ເຂົາຈັ່ງງັ່ງຢູ່ກັບທີ່ "ເປັນໄປບໍ່ໄດ້... !" ເຂົາ ຕາລາຍ ເປັນໄປໄດ້ຢ່າງໃດ ທີ່ລູກຂອງເຂົາມີຮູບອັບປະລັກຜິດເພດ ຄົນປານນີ້... "ນີ້ເຂົາເອີ້ນວ່າ ຜິດຮູບ 80%" ທ່ານໝໍນັ່ງລົງ ທັງ ອະທິບາຍ* (ໜ. 86 ).

ບາງຄັ້ງ ປາຍປາກກາ ຂອງດວງຈຳປາ ທີ່ໄດ້ຈຸ່ມຊຶບເອົານ້ຳ ເມິກສີແດງແຫ່ງຍຸກຊຸມປີຕົ້ນໆ ຂອງການປະຕິວັດຊາດປະຊາທິປະ ໄຕ ຍຸກທີ່ຟົດຟື້ນໄປດ້ວຍບັນຍາກາດ ແຫ່ງອຸດົມມະການສ້າງຄົນ ໃໝ່ຕາມແນວທາງສັງຄົມນິຍົມ ຢ່າງຂັນແຂງນັ້ນ ຕົວລະຄອນເອກ ຂອງດວງຈຳປາ ກໍປາກົດໂຕອອກມາຢ່າງສະຫງ່າງາມ ໜັກແໜ້ນ ຈິງຈັງ ດັ່ງ "ອ້າຍສົມອົກ" ໃນ "ຂ້ອຍຜິດເອງ" (1988) ຫລື "ບຸນທອນ" ກັບ "ໄພວັນ" (ທີ່ຝາກໃຈ).

ສົມອົກ ຊາຍໜຸ່ມຮຸ່ນໃຫຍ່ ພ້ອມຈະມອບຫົວໃຈຮັກ ບໍລິສຸດ ໃຫ້ແກ່ແມ່ຍິງລາວ ຜູ້ເຊີດຊູຄຸນທຸງວັດທະນະທຳ ເຊິ່ງໃນນີ້ ສັນຍະ ລັກແມ່ນ ສິ້ນແລະສາຍແອວເງິນ: *"ສິ້ນລາວນີ້ ມີສະເໜດຶງດູດແທ້ໆ", ອ້າຍສົມອົກວ່າ "ເຫັນຢູ່ໃສ ກໍຈື່ໂລດ ແລະກໍໝັ້ນໃຈໄດ້ວ່າຕ້ອງ ແມ່ນແມ່ຍິງລາວ ເພາະສິ້ນລາວບໍ່ຄືສິ້ນຊາດໃດອີກໃນໂລກ"* (ໜ 132). ເຖິງຈະຮູ້ວ່າ "ສີວຽງຄຳ" ຄົນນັ້ນ ມີອະດີດ ເຊິ່ງສັງຄົມສ່ວນ ໃຫຍ່ ຍັງບໍ່ກ້າຮັບວ່າເປັນເລື່ອງທຳມະດາ ແຕ່ ອ້າຍສົມອົກ ຜູ້ເຄີຍ ຜ່ານແປວໄຟປະຕິວັດ ຜ່ານການເຝິກຝົນຫຼໍ່ຫຼອມ ໃນສະໜາມຕໍ່ສູ້ ເພື່ອປະເທດຊາດມາແລ້ວ ຊ້ຳບໍ່ຄຶດຄືໝູ່ *"ອ້າຍສົມອົກ ແມ່ນຕົວ ແທນ ສົມມະໂນ ທີ່ຂ້ອຍຢາກໃຫ້ມີຫຼາຍໆຢູ່ໃນທົ່ວສັງຄົມຂອງເຮົາ"* (ໜ.125). ນີ້ແມ່ນຊາຍໃນອຸດົມຄະຕິ ທີ່ຄອງປາກກາຂອງ ດວງ ຈຳປາ ວາດອອກມາໃຫ້ເປັນແບບຢ່າງ ຫຼືບໍ່? ແມ່ຍິງຫຼາຍໆຄົນ ຮອມ

ທັງຜູ່ເຄີຍພາດພັ້ງມາແລ້ວ ຄົງຢາກນົບໄຫວ້ ຂໍໃຫ້ມີຜູ່ຊາຍທີ່ເປັນສຸພາບບຸລຸດ ມີນໍ້າໃຈບໍ່ເອົາປຽບແມ່ຍິງ ແນວນີ້ຫຼາຍໆແດ່. ແຕ່ຢາກຈະມີຄົນແບບນີ້ຫຼາຍໆ ໃນສັງຄົມ ກໍຄົງຕ້ອງມີ ການກໍ່ສ້າງ ແລະນີ້ກໍແມ່ນສະເໜີອີກຕ່ອນນຶ່ງໃນເລື່ອງສັ້ນຊຸດນີ້ ຂອງດວງຈຳປາ.

ຄວາມຈິງ ເລື່ອງສັ້ນ ຂອງດວງຈຳປາ ຍັງມີອີກຫຼາຍ ແຕ່ທີ່ຄັດເລືອກເອົາມາ ສິບເອັດເລື່ອງນີ້ ກໍເພາະມີຄວາມຫຼາກຫຼາຍ ແປກຕ່າງ ທັງດ້ານ ກາລະ ແລະ ເທສະ ຍ້ອນຄືນຫຼັງໄປຮອດສີ່ສິບກວ່າປີ ເຊິ່ງລາງເຫດການ ລາງຕອນ ທ່ານຜູ່ອ່ານ ອາດຈະອຸໄທອຸທັງອອກມາວ່າ ເປັງນັ້ນມັນມີເລື່ອງແນວນີ້ພຸ້ນເນາະ?

ນັ້ນສະແດງວ່າ ເລື່ອງເຫຼົ່ານີ້ ເປັນຕົວແທນແຫ່ງການເວລາເປັນສ່ວນນຶ່ງຂອງປະຫວັດສາດ ໃນອາລະ ໃດນຶ່ງແລ້ວ.

ສຳນັກພິມ ດອກເກດ ພາກພູມໃຈ ທີ່ໄດ້ນຳສະເໜີຜົນງານຊຸດນີ້ຂອງ ດວງຈຳປາ ສິບເອັດເລື່ອງ ສິບເອັດລົດຊາດ ສິບເອັດບົດບັນທຶກປະຫວັດສາດສັງຄົມລາວ ທີ່ຫາອ່ານໃນໜ້າຂ່າວບໍ່ໄດ້ຕ້ອງອ່ານໃນເຫຼັ້ມນີ້ "ໃຜວ່າ ເງິນເປັນພະເຈົ້າ".

ນະຄອນຫຼວງວຽງຈັນ, ກັນຍາ 2011

ດວງເດືອນ ບຸນຍາວົງ

ໄປຢູ່ຕ່າງປະເທດຫຼາຍປີ ກັບຄືນບ້ານເກີດ ໃນເດືອນກໍລະກົດ ໑໙໗໐ ກໍໄດ້ມາສຳຜັດກັບ ຄວາມປ່ຽນແປງອັນໄວວາ ໃນສັງຄົມບ້ານເມືອງ ເຮົາ ສິ່ງທຳອິດທີ່ເຫັນງ່າຍໆ ກໍຄື ເມື່ອສະພາບ ເສດຖະກິດ ແລ່ນໄປນຳກະແສຂອງໂລກ ປະຊາ ຊົນ ກໍຕ້ອງພົບກັບຄວາມຝືດເຄືອງອັນໜັກໜ່ວງ ຄ່າຄອງຊີບພຸ່ງຂຶ້ນສູງຫຼາຍເທົ່າຕົວ. ຂວັນທຸກ ຂວັ້ນຮັ່ງ ແຍກທ່າງຢ່າງຂາດຂັ້ນ ດັ່ງຈະນຳມາ ສາທະຍາຍ ໃນ ເສືອ... ກ... ນີ້ແລ.



# ເສືອ...ກ...

✍ 1971

ໃຕ້ຟ້າວຽງຈັນຍາມທ່ຽງ ທີ່ແດດເຜົາປານເຂົ້າເຕົາອົບນັ້ນ ກ່ອນຈະກ້າວຂຶ້ນສູ່ ລົດເມປະຈຳທາງເມືອເຮືອນ ບຸນກອງ ກໍຈຳຕ້ອງງວາກມາເຮັດໜ້າແຫ້ງແລ້ງຫົວຕອບບຸລຸດຮ່າງພີ ຂະໜາດເກົ້າສິບກິໂລ ຊຶ່ງຕົນພໍຈື່ໆໜ້າໄດ້ວ່າແມ່ນ "ບັກໂຄ້ນ" ສະຫາຍຮ່ວມໂຮງຮຽນປະຖົມຄາວກີ້... ໝໍນີ້ມັນປັນຍາປຶກ ຮຽນໜັງສືບໍ່ຄ່ອງແຕ່ໃດ ດີແຕ່ມັນພາໄປລັກໝາກໂມທາດດອນຈັນ ແລະຊວນລອຍຂ້າມຄອນຊຽວ ໄປສີຊຽງໃໝ່ນັ້ນລະເກົ່າ ພະນັນກັນໄດ້ວ່າ ໝໍຮຽນບໍ່ກາຍແຊກ*ໄປໃສດອກ.

---

ແຊກ: ຫຍໍ້ມາຈາກພາສາຝຣັ່ງ Certificat ແປວ່າ ໃບປະກາດໄຊຍະບັດ ຈົບຊັ້ນປະຖົມສະໄໝນັ້ນ.

ແຕ່ເປັນຫຍັງ ທ່າທາງໝໍຄືຄົນມີເງິນແທ້! ເບິ່ງເຄື່ອງແບບສີງາມຕາ ກັບປະລັກແຂນຄຳເສັ້ນຮາວໂປ້ຕີນ ໂມງກໍສາຍທອງຄຳຝຣັ່ງ... ທ່າທາງມັນພູມຖານເອົາແທ້ ຕ່າງກັບບຸນກອງ ຊຶ່ງຮຽນຈົບຮອດ ດີໂປຼມ*ຢ່າງດີ ອອກມາເປັນຂ້າລາຊະການກະຊວງສຶກສາ ຊ້ຳໃດກໍຊ້ຳນັ້ນມາເປັນສິບປີແລ້ວ !

ເງິນເດືອນຂັ້ນໂທ 4 ແຕ່ລູກກໍຫົກຄົນ ໃຜຈັ່ງຊາວ່າຈະກຸ້ມກິນ!.

"ໄປຈັ່ງໃດມາຈັ່ງໃດ໋ສຽວ?". ບັກໂຄ້ນຈັບມືສັ່ນແບບຝຣັ່ງ ທ່າທາງບອກວ່າ ມັນກໍນາຍຜູ້ນຶ່ງລະ ບຸນກອງ ກໍຂະໜາດ (ເຊັບເບັ້ຽໂຣ້)* ຄືກັນ ແຕ່ທ່າທາງຄົງຈະຫົດລີບຊະນິດເບິ່ງອອກໂລດວ່າ "ຖົງແປ"

"ເຮົາກະຈັ່ງຊີ້ແລ້ວ ບໍ່ເຫັນກັນດົນ ໂຕຄືພໍໄປພໍມານີ້?"

ບຸນກອງອຶດງຶດງໍ້ອັດສະຈັນບໍ່ໄດ້ວ່າ ເຮັດໃດ໋ຄວາມຮູ້ຄວາມຫຼັກແນວຕາຍໆຄືບັກໂຄ້ນ ບຸນຫຍັງມາສິ່ງຍູ້ໃຫ້ມັນຮັ່ງມີເປັນດີເອົາແທ້ ເປັນແບບນີ້ຊິຮຽນມັນໄປເຮັດຫຍັງຫວາ... ໜັງສືນີ້? ມາເປັນຕານ້ອຍໃຈແທ້!

"ເອີ! ເຕົ່າກະກຸ້ມປາກເຕົ່າຫັ້ນລະນາ" ມັນວ່າທັງຄວາດຶງໃຫ້ຍ່າງນຳມັນໄປ.

---

*ເຊັບເບັ້ຽໂຣ້ Chef-Bureau: ຫົວໜ້າຜະແໜກ*
*ດີໂປຼມ: ຈົບປະກາດໄຊຍະບັດ ມ. 4 (ມ. ຕົ້ນ)*

"ໄປກິນເຂົ້ານຳເຮົາຈັກຄາບນ໊ະ ພຸ່ນ! ເຮົາເຊີນໝູ່ໄວ້ຫຼາຍຄົນ ໄປນຳກັນໄປ໊" ສອງສະຫາຍຍ່າງເລາະໄປເຂົ້າພັດຕາຄານຊັ້ນດີ ບຸນກອງທັນໃຈໃຫຍ່ເຂົ້າ ໃຫ້ທ່າທາງຜຶ່ງຜາຍຂຶ້ນ ເພາະດົນແສນດົນ ຈຶ່ງຈະມີໂອກາດຜ່ານກາຍມາໃນສະຖານທີ່ເຊັ່ນນີ້... ຊີກິນມື້ຂົ້ວເຟີຂົ້ວແຕ່ລະເທື່ອ ກໍຍັງຄຶດແລ້ວຄຶດອີກ ຊາຫຍັງວ່າຈະໄດ້ກິນສັບເປັດສັບໄກ່... ເງິນເດືອນໝົດເດືອນໃຫ້ແມ່ອ້ອຍຊື້ເຂົ້າໜຽວໄຖ່ນຶ່ງໄວ້ເຮືອນ ຊື້ປຶ້ມສໍໃຫ້ລູກຈຸໃຫຍ່ ຊື້ນົມໃຫ້ຜູ່ນ້ອຍແລ້ວຈຶ່ງໄວ້ຊື້ຊີ້ນຊື້ປາ ນຳຕະຫຼາດກິນປະຈຳວັນກໍຍັງບໍ່ຮອດວັນທີ 20 ຈັກເທື່ອ ຄັນຍາມຢູ່ດີມີແຮງ ແມ່ອ້ອຍລົງທົ່ງນາຢູ່ອ້ອມແອ້ມເຮືອນ ກໍພໍໄດ້ປູປາມາປົ່ນມາແຈ່ວສູ່ກັນກິນ ຊຳຊາຮອດມື້ໝົດເດືອນ.

ສ່ວນເຝີ ກໍຢ່າວ່າແຕ່ຈະເອົາລູກເມຽໄປລ້ຽງຄົນຖ້ວຍ ໃຫ້ມ່ວນກັນເລີຍ ຊື້ມາດ້າມຖ້ວຍ ແມ່ອ້ອຍກໍຈຳໃຫ້ລູກເອົາເຂົ້າໜຽວຈຸ່ມກິນ ຢ້ານບໍ່ພໍອີ່ມ.

ຄຶດແລ້ວບຸນກອງກໍນັ່ງລົງຕັ່ງ ພາຍໃນຫ້ອງຕິດອາຍເຢັນມີສາວຊາວຈີນ ໜ້າຕາເປັນຕາຮັກ ນຸ່ງກະໂປງສັ້ນໆ ມາຈົດຊື່ຂອງກິນ ຄືດັ່ງທີ່ບຸນກອງເຄີຍອ່ານໃນນິຍາຍຝຣັ່ງ ຫຼືໄທບໍ່ມີຜິດ.

ໝູ່ຂອງບັກໂຄ້ນມາຮອດຕິດໆກັນ ລ້ວນແຕ່ເວົ້າລາວບໍ່ຂອດທັງນັ້ນ ແຕ່ພວກເຂົາກໍມີບັດປະຈຳຕົວເປັນລາວ ມີທັງ

ໜັງສືຜ່ານແດນ ແລະ ປະກອບອາຊີບທີ່ເວົ້າກັນວ່າສະຫງວນໄວ້ໃຫ້ຄົນລາວໂດຍສະເພາະທັງນັ້ນ ຄືວ່າຫັ້ນລະ ກະຍັງວ່າຂະເຈົ້າກະເປັນລາວ!

ມາຮອດ ກໍຈັບໄມ້ຈັບມືກັນຢ່າງໃຫຍ່ ຄືພວກໜັງຂາວບໍ່ມີຜິດອີກ ບຸນກອງຄຶດແລະຄຶດ ຈັ່ງແມ່ນທັງລາວແລະຈີນ ກໍພາກັນລືມຊາດໝົດບໍ ຈະເວົ້າຈະຖາມກັນ ກໍໃຫ້ມັນຄືປະເພນີໂຕແດ່ກໍບໍ່ຢືມແຕ່ວັດທະນະທຳເຂົາມາໃຊ້ຢູ່ພໍຮາວນັ້ນ ຕິຫຼາຍກໍບໍ່ໄດ້ ຄົນລາວໂຕກໍດາວ່າຫຼີງໄຫຼບໍ່ເຂົ້າທ່າ ຫຼືງມານຳແຕ່ຜູ້ໃຫຍ່ພຸ້ນພາເດັກນ້ອຍເຮັດ ລິດສະແດງຄວາມເຄີຍເປັນຂີ້ຂ້າຊາດໜັງຂາວອອກມາບໍ່ວ່າງເວັ້ນ ຄັນເວົ້າລະວ່າໂຕໄດ້ເອກະລາດຄົບຖ້ວນວ່າຊັ້ນ ມັນຊິໄດ້ຮາວໃດ ແນວວັດທະນະທຳເຂົາກໍເອົາມາໃຊ້ໂຕໜັງສືເຂົາກໍເອົາມາໃຊ້ຢູ່ ອີກຈັກປີຈັກຊາດຈຶ່ງຈະແມ່ນເອກະລາດຄົບຖ້ວນເດັ້ນໍ!

ວ່າກັນຮອດບັ້ນສະຫາຍ (ຈີນ) ຂອງບັກໂຄ້ນມາຮອດຖາມສະບາຍກັນແບບຝຣັ່ງແລ້ວບັກໂຄ້ນກໍບໍ່ຄອງຖ້າດົນ ຜາກົດມັນບອກສາວເສີບນຳເຫຼົ້າ (ຝຣັ່ງອີກ) ຢ່າງດີກັບຂອງແກ້ມອອກມາ ລິງມືກິນປີບປັບແບບກຸລີເລີຍ ບຸນກອງລິດຮັກສາມາລະຍາດສະຫງ່ຽມຄ່ຽມຄົມຢູ່ ເພາະຄຶດວ່າຢູ່ໃນຮ້ານອາຫານໃຫຍ່ໂຕຈັ່ງຊີ້ການກິນກໍຄືງຕ້ອງກິນຢ່າງມີລະບຽບ ແຕ່ຊິໃດໄດ້ ທັງກິນທັງຮ້ອງໂຫວກເຫວກໃສ່ກັນ ຟັງສຽງດັງມາຈາກທາງອື່ນຈີນແສບແກ້ວຫູ

ມີແຕ່ເຈົ້ານາຍຜູ້ໃຫຍ່ ກໍຍັງຮ່າວກິນຟົດກິນບັນ ຄັນວ່າຄວາມລືມກໍຍິນແຕ່ຄຳຂີ້ດຽດ ໂອ່ຄົນຊັ້ນສູງກໍຮູ້ເວົ້າພາສາຕະຫຼາດ ພາສາສະແລງ*ນໍ້?

ຂອງກິນທີ່ສາວເສີບສົ້ນສັ້ນນຳມາວາງ ຍິນບັກໂຄ້ນຮ້ອງຊື່ວ່າ ຍຳຕີນໄກ່ແດ່ ໄກ່ຍ້າງແດ່ ແລະຈຳພວກຂີ້ວອີກຫຼາຍແນວຈົນບໍ່ຈື່ ຄັນເຫັນຄົນອື່ນເດ່ໄມ້ຖູ່ຄີບກັນຍຸບຍັບ ບຸນກອງກໍໃຈກ້າຂຶ້ນຄີບນຳເຂົາໄປເປັນປົກກະຕິ ກິນໄປຫຼາຍຄຳ ຈຶ່ງຊວາດຮູ້ເມື່ອວ່າ... ຕາຍຫ່າ ກິນກັບດາຍດອກ... ບໍ່ມີເຂົ້າມາລ່ອງພໍຄຳ... ໃຈຢາກບອກບັກສະຫາຍຜູ້ເປັນເຈົ້າພາບວ່າ ເອົາເຂົ້າມາກິນແດ່ ກໍບໍ່ກ້າ... ພໍດີມີແຂກຄົນຈີນໝໍ່ນຶ່ງເອີ້ນເອົາເຂົ້າມາ... ບຸນກອງກໍຄຶດຂອບໃຈມັນຢູ່ໃນໃຈ ຟ້າວຄຸ້ຍເຂົ້າຈ້າວສີຂາວງາມເຂົ້າປາກ ຫຍ້ຳຕຸ້ຍໆ ຕັກຂີ້ວຕັກແຈ່ວຮາດໃສ່ ຄີບຕ່ອນຊີ້ນໄກ່ຕ່ອນຮາວຝ່າມືແຫ້ນກັດ...

*ເອີ້ ຄົນມີເງິນໜີ້ ເຂົາກິນກັນຈັ່ງຊີ້ນໍ້ ກິນໄກ່ເປັນໂຕໆ ບໍ່ດຽວໝົດ ບາດແມ່ອ້ອຍນ໊າ! ດົນໆຈັ່ງວ່າໄດ້ໄກ່ດ້າມຕ່ອນເມືອເອາະ ໂພະໝາກແຄ້ງໝາກເຂືອລົງວ່າຊັ້ນ ຈົນບໍ່ເຫັນຕ່ອນໄກ່!*

ຍຳຕີນໄກ່ຈັ່ງໃຊ້ນັ້ນ ກໍຈັ່ງແມ່ນແຊບ ກິນລ້າງໆແຫ່ງດີລົ້ນນ້ຳລາຍອອກປາກ ຮ່າຍເຫຼົ້າວິສະກີ້ໃສ່ໂສດາລົງໄປອີກແດ່

---

*ສະແລງ: slang ພາສາອັງກິດ ໝາຍເຖິງຄຳສັບທີ່ຄົນໃຊ້ເວົ້າປະດິດຂຶ້ນໃໝ່ ບໍ່ທັນເຂົ້າໃນລະບົບພາສາອັງກິດມາດຕະຖານ.*

ຄືວ່າຫູຕຶງໜ້າຕັ້ງຂຶ້ນ ຫຼຽວເບິ່ງໝູ່ຮອມໂຕະ ໜ້າຈັ່ງໃດກໍຢາກຫົວໃສ່. ລາບປາກແຫ້ງໆຊາງວ່າໄດ້ມາລອງຊີມນຳເພິ່ນ ນີ້ມັນກໍປານອາຫານທີ່ຢູ່ເມືອງສະຫວັນແລ້ວຕວ່າ ຂອງວ່າສັ່ງແລ້ວກໍໄດ້ກິນໂລດ ຈັດແຈ່ງມາຢ່າງງາມ ຊໍ້າບໍ່ພໍສາວສິ້ນກີ້ນຜູ້ມາເສີບນັ້ນບັກໂຄ້ນເອົາມືໃຫຍ່ໆໜາໆ ຟາດກົ້ນເປະ ກໍຍັງອວ່າຍໜ້າມາຫົວຍິ່ງແຂ້ວໃສ່ຊໍ້າ!

ຢາກເອົາລູກເອົາເມຽມາກິນຈັ່ງຊີ້ຈັກເທື່ອເດ້ ພໍໃຫ້ຂະເຈົ້າໄດ້ມີວາດເວົ້າ! ແຕ່ຈະເອົາເງິນທາງໃດມາຈ່າຍລະ ແນວບໍ່ມີທາງລາບລວຍນຳເພິ່ນ ມີແຕ່ເງິນເດືອນຂີ້ຫຼໍ້ ຫຼາຍເທື່ອບຸນກອງຢາກຊື້ເບີສ່ຽງໂຊກລອງເບິ່ງ ຂໍຂອດຍອດຊື້ 200-300 ກີບ ບໍ່ຖືກຈ້ອຍເມຽກໍຮ້າຍຫົວເອົາ ເອົາໄປເອົາມາກໍເລີຍບໍ່ຫຼິ້ນຫຍັງລະ ຄັນບໍ່ພໍມາ ກໍໃຫ້ແມ່ອ້ອຍແລ່ນເໜືອແລ່ນໃຕ້ມາຕື່ມ ພໍແລ້ວມື້ແລ້ວເດືອນໄປ.

ຄຶດເລີຍໄປ ເດືອນນີ້ຕົກທີ່ນັ່ງໜັກເອົາການ ເພາະແມ່ອ້ອຍອອກລູກຜູ້ທີທົກ ອອກກໍມາອອກເອົາບາດໝໍ່ກາງເດືອນ ຫາຜູ້ຊີງັນກາຳພໍໄດ້ຕຶງແດ່ກໍບໍ່ມີ ບາດເຮືອນເຈົ້າເຮືອນນາຍເພິ່ນນ໊າ ເພິ່ນກໍຮັ່ງມີເຫຼືອລົ້ນ ຄັນວ່າເມຽກາຳລູກ ເພິ່ນຄືວ່າງັນກາຳໄດ້ຕັ້ງຫຼາຍແສນ (ຕາມໄດ້ຍິນລູກນ້ອງເຂົາໂສກັນໃຫ້ຟັງ ເຮືອນພະນະທ່ານນັ້ນ ເຮືອນພະນະທ່ານນີ້ ເຮືອນນາຍພົນນັ້ນ ໗ລ໗) ນີ້ລະເພິ່ນວ່າທຸກແຮ່ງຕື່ມທຸກ ຮັ່ງແຮ່ງຕື່ມຮັ່ງ.

ນີ້ກໍວັນທີ 24 ພໍດີ! ບຸນກອງຄິດຊວາດຮູ້ເມື່ອຄິງ ຄື ຜາກິດມີສຽງແວ່ວໆ ຂອງແມ່ອ້ອຍດັງເຂົ້າຫູມື້ເຊົ້ານີ້ວ່າ ບໍ່ມີເງິນ ອອກຕະຫຼາດ ຊິຊື້ຕຳສົ້ມໝາກຫຸ່ງມາໃຫ້ລູກກິນຈັກຫ້າສິບແລະ ຊຽບໝູຈັກຊາວ ກໍຄືງແລ້ວຄາບ ເງິນແມ່ອ້ອຍຍັງແຕ່ພັນດຽວ ຈະ ຕ້ອງຊື້ນົມຜົງປ່ອງໃຫ້ແອນ້ອຍໃນມື້ນີ້ລາຄາ670ສະນັ້ນການຈ່າຍ ແນວອື່ນຕ້ອງງົດໄປກ່ອນ ຈະແລ່ນຫາໃຜກໍຄືງຍາກ ຄັນກາຍ ວັນທີ 20 ມາແລ້ວ.

ຄາວນຶ່ງ ບຸນກອງສະເດີດຮູ້ເມື່ອຄືງ ສຽງບັກໂຄ້ນຮ້ອງສັ່ງ ຍຳຕີນໄກ່ມາອີກ ລະຄວາມຄິດຫ່ວງໃຍນຳລູກເມຍໄວ້ທັ້ນຊົ່ວຄາວ ກ່ອນເທາະ ຟ້າວເລັ່ມກິນຂົ້ວຊິ່ງຄ້າງຖ້ວຍຢູ່ໃຫ້ໝົດ ເພື່ອຈະຄີບ ຍຳມະຫາແຊບນຳໝູ່ຄັກໆ ແຕ່ບາດແລ້ວ ເມື່ອຍຳຕີນໄກ່ເຂົ້າປາກ ອີກ ທ້ອງມັນເຕັມຂຶ້ນອີກ ສະໝອງອັນຫວ່າງເປົ່າກໍຄິດຕໍ່ໆໄປ "ຮວ້າຍ! ປານນີ້ແມ່ອ້ອຍຄືຊິເມື່ອຍຖ້າ ແລະ ພາລູກກິນເຂົ້າ ກັບຕຳໝາກຫຸ່ງອີ່ມໄປແລ້ວຕີ້ ອີ່ນາງຕູ່ຜູ້ຕິດກັບນົມເດ້ ມັນຊິກິນ ໄດ້ບໍ່ຕຳໝາກຫຸ່ງ? ມັນຫາຊິໄດ້ຂວບປາຍ". ສຽງແຂກໃນຄະນະ ຄົນນຶ່ງອອກປາກວ່າ ເອົາໄກ່ອີກຕົວນຶ່ງລະ ແລ້ວບໍ່ພໍ 5 ນາທີ ຈານໄກ່ກໍຖືກນຳມາວາງ ບຸນກອງເດໄມ້ຖູໄປຄີບມາຕ່ອນນຶ່ງ ແຕ່ບໍ່ທັນໄດ້ກິນ ພາບລູກນ້ອຍ 6 ຄົນກັບເມຍຜາກິດເດັ່ນຂຶ້ນ ໃນສຳນຶກ ອະນິຈາ ອາຫານຄາບນີ້ ເມຍແລະລູກກູກິນບໍ່ໝົດພໍ 100 ກີບ ແຕ່ກູກັບນັ່ງກິນຊີ້ນໄກ່ດາຍດອກຢ່າງສະບາຍ!

ໄກ່ຈານສຸດທ້າຍຍັງແດງເຕັມຈານ ປາກົດຄືບຜູ້ຕ່ອນແລ້ວກໍບໍ່ມີໃຜກິນຕໍ່ ຄືງຈະອີ່ມຄັບທ້ອງໄປໝົດແລ້ວ ບຸນກອງກໍກິນບໍ່ລົງອີກນັ່ງຫຼຽວເບິ່ງຕ່ອນຊີ້ນໄກ່ດ້ວຍຈິດໃຈລິດສະຫຍານໍ້າຕາບຸນກອງໄຫຼຊຶມເຂົ້າໄປໃນຫົວໃຈ ຖ້າໄດ້ໄກ່ 6-7 ຕ່ອນງາມໆນີ້ໄປໃຫ້ລູກ! ບຸນກອງຄຶດ.

ບັກໂຄ້ນເອີ້ນສາວເສີບມາໄລ່ເງິນ ເຂົາເອົາເຈັ້ຽມາຂຽນເປັນແຖວ ແລ້ວສິມຣວມຍອດມາວາງຕໍ່ໜ້າບັກໂຄ້ນ ແຕ່ແມ່ນອາເສັ່ງສະຫາຍຄົນນຶ່ງຍາດເອົາໃບບິງໄປ ບຸນກອງເຫັນໝໍນັ້ນງັດຕັບ 10 ພັນວາງລົງແລະດຶງໃບພັນອອກມາຕື່ມອີກ 4-5ໃບ.

ອະນິຈາ ມັນທໍ່ກັນກັບເງິນເດືອນຂອງເຂົາເດືອນນຶ່ງພໍດີ!

ໝົດທຸກຄົນລຸກຂຶ້ນ ຈັບມືສັ່ງລາກັນແບບຝຣັ່ງ ຣວມທັງພວກຈີນທີ່ອ່ານໂຕຝຣັ່ງບໍ່ອອກ ບຸນກອງຂອບອົກຂອບໃຈບັກໂຄ້ນຢ່າງໃຫຍ່ ແຕ່ເມື່ອຈະກ້າວອອກຈາກພັດຕາຄານພ້ອມກັບເກົາເກົ່ານັ້ນ ບຸນກອງກໍຄຶດຫຍັງໄດ້ພໍດີ ເຂົາຍ່າງຄືນໄປທາງປະຕູເຮືອນຄົວຂອງຮ້ານອາຫານ ພົບສາວເສີບຜູ້ເກົ່າ ຕາງຕິຖາມຫາຫ້ອງນໍ້າແລ້ວກໍຕື່ມວ່າ:

"ໄກ່ເຫຼືອກິນວ່າງກີ້ນີ້ ຫໍ່ໃຫ້ແດ່" ແລ້ວກໍຍ້ອນເຫັນສີໜ້າບໍ່ພໍໃຈແກມດູຖູກວາດໃດວາດນຶ່ງຂອງສາວນັ້ນ ບຸນກອງເລີຍເວົ້າຕໍ່ວ່າ "ຊິເອົາໄປໃຫ້ໝາດອກ" ເຂົາ *ເສືອກ* ສະແດງການຊື້ໜ້າເຈົ້າຂອງໄວ້.

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ